**ບົດອອກຂ່າວ**

## ພິທີເປີດນຳໃຊ້ສະຖານີວິທະຍຸເພື່ອການພັດທະນາເມືອງນາກາຍ, ແຂວງຄຳມ່ວນ ຢ່າງເປັນທາງການ

ຕອນເຊົ້າຂອງວັນທີ່ 25/9/2020 ຢູ່ທີ່ເມືອງນາກາຍໄດ້ມີພິທີເປີດການນຳໃຊ້ແລະ ອອກອາກາດຂອງສະຖານີວິທະຍຸເພື່ອການພັດທະນາເມືອງນາກາຍຢ່າງເປັນທາງການ. ສະຖານີວິທະຍຸດັ່ງກ່າວນີ້ໄດ້ຮັບການປັບປຸງ ແລະ ຍົກລະດັບກຳລັງສົ່ງຂຶ້ນເປັນ1ກິໂລວັດ ຊຶ່ງແມ່ນການຮ່ວມມືລະຫ່ວາງອົງການ ສປຊ ແລະ ກະຊວງ ຖວທ ຊຶ່ງແມ່ນໂຄງການ ສສປວ ເປັນຜູ້ຈັດຕັ້ງປະຕິບັດ ແລະ ພາຍໃຕ້ການຊີ້ນຳ ກວດກາຈາກ ກົມສື່ມວນຊົນ ກະຊວງ ຖວທ, ສະຖານີວິທະຍຸເພື່ອການພັດທະນາເມືອງນາກາຍໄດ້ຮັບທຶນສະໜັບສະໜູນຈາກອົງການ ອົງການ ສະຫະປະຊາຊາດເພື່ອການພັດທະນາປະຈຳລາວ (ສປຊ) ແລະ ບໍລິສັດໄຟຟ້ານເທີນ 2 ເປັນມູນຄ່າລວມທັງໝົດ 200,000 ໂດລາ ໂດຍການປະກອບສ່ວນຂອງບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ 60% ແລະ ອົງການ ສປຊ 40% ແລະ ໂຄງການ ດັ່ງກ່າວແມ່ນມີ ໄລຍະເວລາ  3 ປີ ເລີ່ມຕັ້ງແຕ່ ເດືອນກັນຍາ ປີ 2019 ຫາເດືອນ ສິງຫາ ປີ 2022.

ເປັນກຽດເຂົ້າຮ່ວມໃນພິທີດັ່ງກ່າວໂດຍ ພະນະທ່ານ ໂອໄດ ສຸດາພອນ, ເຈົ້າແຂວງ ແຂວງຄຳມ່ວນ, ພະນະທ່ານ ສະຫວັນຄອນ ຣາຊມຸນຕີ, ຮອງລັດຖະມົນຕີ ກະຊວງຖະຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ທ່ານ ນາງ ຈິນຣາ ຄິມ, ຕາງໜ້າຈາກອົງການສະຫະປະຊາຊາດເພື່ອການພັດທະນາປະຈຳລາວ, ແລະ ທ່ານ ສເຕຟານ ເລມາຊອນ, ຜູ້ອຳນວຍການຝ່າຍເຕັກນິກ ແລະ ການຜະລິດ ບໍລິສັດໄຟຟ້ານ້ຳເທີນ 2 ພ້ອມດ້ວຍບັນດາຜູ້ເຂົ້າຮ່ວມຈາກລະດັບສູນກາງ ແລະ ທ້ອງຖິ່ນ ຂອງລັດຖະບານ, ຄູ່ຮ່ວມພັດທະນາ, ອາສາສະໝັກວິທະຍຸຊຸມຊົນ ແລະ ບັນດາອົງການຈັດຕັ້ງທ້ອງຖິ່ນ.

ໃນພິທີດັ່ງກ່າວ, ພະນະທ່ານ ໂອໄດ ສຸດາພອນ, ເຈົ້າແຂວງ ແຂວງຄຳມ່ວນ ໄດ້ກ່າວຂອບໃຈຕໍ່ອົງການສະຫະປະຊາຊາດເພື່ອການພັດທະນາປະຈຳລາວ ແລະ ບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດສຳລັບການປະກອບສ່ວນທີ່ສຳຄັນໃຫ້ແກ່ວິທະຍຸຊຸມຊົນ ເພື່ອເປັນເຄື່ອງມືອັນມີປະສິດທິພາບສຳລັບການພັດທະນາເສດຖະກິດ-ສັງຄົມ ກໍ່ຄືການບັນລຸເປົ້າໝາຍການພັດທະນາແບບຍືນຍົງພາຍໃນເມືອງ ກໍ່ຄືໃນແຂວງ.

ພ້ອມດຽວກັນນັ້ນ, ພະນະທ່ານ ສະຫວັນຄອນ ຣາຊມຸນຕີ ໄດ້ຮັບຮອງເອົາຜົນສຳເລັດ ຂອງໂຄງການດັ່ງກ່າວ ການປະກອບສ່ວນອັນສຳຄັນຂອງໂຄງການ ໃນການພັດທະນາປະເທດ, ໃນຂະນະດຽວກັນ ທ່ານກໍ່ຍັງປຸກລະດົມໃຫ້ທຸກຄົນ ເຮັດວຽກຮ່ວມກັນເພື່ອແກ້ໄຂບັນຫາ ແລະ ຜ່ານຜ່າສິ່ງທ້າທາຍຕ່າງໆທີ່ຈະເຈົ້າມາໃນອານາຄົດ.

ທ່ານ ຈິນຣາ ຄິມ ຮັກສາການ ຫົວໜ້າພະແນກການປົກຄອງ, ອົງການ ສປຊ ໄດ້ຍ້ອງຍໍຊົມເຊີຍມາຍັງລັດຖະບານລາວ ພາຍໃນການນຳພາຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ອຳນາດການປົກຄອງທ້ອງຖິ່ນ, ອາສາສະໝັກວິທະຍຸຊຸມຊົນທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດດັ່ງກ່າວປະສົບຜົນສຳເລັດ. ເພີ່ນໄດ້ກ່າວຕື່ມວ່າການເປີດນຳໃຊ້ສະຖານີໃນຄັ້ງນີ້ຍັງເປັນການປະກອບສ່ວນເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງໃນປີ 2030. ເຊິ່ງປະຈຸບັນ, ລາຍການອອກອາກາດທາງວິທະຍຸຊຸມຊົນໄດ້ອອກອາກາດຫຼາຍຫົວຂໍ້ທີ່ກ່ຽວກັບການສຶກສາ, ສຸຂະພາບ, ກະສິກຳ ແລະ ສິ່ງແວດລ້ອມ ແລະ ອື່ນໆ, ນອກຈາກນີ້, ທ່ານໄດ້ປຸກລະດົມໃຫ້ພາກສ່ວນທີ່ກ່ຽວຂ້ອງຈາກລັດຖະບານ, ຊຸມຊົນ, ພາກສ່ວນທຸລະກິດ ໃຫ້ມີສ່ວນຮ່ວມເພື່ອຊຸກຍູ້ເຮັດໃຫ້

ວິທະຍຸຊຸມຊົນແຫ່ງນີ້ຊ່ອງທາງໜຶ່ງໃນການແລກປ່ຽນ ແລະ ສົ່ງຕໍ່ຂໍ້ມູນໃຫ້ກັບຊຸມຊົນ ເຊິ່ງຈະກ້າວໄປເຖິງການມີສ່ວນຮ່ວມໃນການຕັດສິນໃຈຂອງຊຸມຊົນເພື່ອການພັດທະນາເສດຖະກິດສັງຄົມຢ່າງແທ້ຈິງ.

ທ່ານ ສເຕຟານ ເລມາຊອນ, ຜູ້ອໍານວຍການຝ່າຍເຕັກນິກ ແລະ ການຜະລິດ ບໍລິສັດໄຟຟ້ານ້ຳເທີນ 2ໄດ້ກ່າວ, ມີຄວາມຍິນດີ ແລະ ພາກພູມໃຈເປັນຢ່າງຍິ່ງທີ່ໄດ້ມາຮ່ວມງານພິທີເປີດນໍາໃຊ້ສະຖານີວິທະຍຸຊຸມຊົນເພື່ອການພັດທະນາເມືອງນາກາຍໃນຄັ້ງນີ້. ທ່ານໄດ້ຮູ້ສຶກດີໃຈທີ່ເຫັນການປະກອບສ່ວນສົມທົບລະຫວ່າງ ບໍລິສັດໄຟຟ້ານ້ຳເທີນ 2 ແລະ ອົງການ ສປຊ ໃນຄັ້ງນີ້ແມ່ນສາມາດຍົກລະດັບ ແລະ ຂະຫຍາຍເຄືອຄ່າຍສັນຍານວິທະຍຸຊຸມຊົນເພື່ອການພັດທະນາເມືອງນາກາຍໃຫ້ຄອບຄຸມໄດ້ໄກກ່ວາເກົ່າເພື່ອໃຫ້ປະຊາຊົນຜູ້ທີ່ຢູ່ຫ່າງໄກຊອກຫຼີກ ສາມາດເຂົ້າເຖິງຂໍ້ມູນຂ່າວສານໄດ້. ເພິ່ນກໍ່ຖືໂອກາດຕາງໜ້າບໍລິສັດໄຟຟ້ານ້ຳເທີນ 2 ຂອບໃຈມາຍັງລັດຖະບານລາວ ກໍ່ຄື ກະຊວງຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວລວມທັງອໍານາດການປົກຄອງແຂວງ ແລະ ເມືອງທີ່ຊ່ວຍໃຫ້ທິດຊີ້ນໍາ ແລະ ສະໜັບສະໜູນໃຫ້ໂຄງການນີ້ເກີດຂຶ້ນ.

ໂດຍລວມແລ້ວ ຈຸດປະສົງຂອງໂຄງ ການດັ່ງກ່າວແມ່ນເພື່ອຮັບປະກັນໃຫ້ປະຊາຊົນຢູ່ເຂດຫ່າງໄກຊອກຫຼີກໄດ້ເຂົ້າເຖິງຂໍ້ມູນຂ່າວສານເພີ່ມຂຶ້ນ ໃນດ້ານຕ່າງໆ ພ້ອມດຽວກັນນັ້ນ ຊຸມຊົນຈະສາມາດມີສ່ວນຮ່ວມໃນການຕັດສິນໃຈເພື່ອພັດທະນາຊຸມຊົນກໍ່ຄືຊ່ວຍປັບປຸງຄຸນນະພາບຊີວິດຂອງພວກເຂົາໃຫ້ດີຂຶ້ນ.

**ສໍາລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່**


ກົມສື່ມວນຊົນ, ກະຊວງ ຖວທ: ທ່ານບຸນຫາບ ສຸລິໂຍ, ຜູ້ຈັດການ ໂຄງການ ສສປວ, ຮອງຫົວໜ້າກົມສື່ມວນຊົນ
ໂທ: 020 22437662
ເມວ: bounhaps@hotmail.com

UNDP: ທ່ານ ນາງ ຂັນພູເງິນ ວໍລະອົດ, ຜູ້ຮັບຜິດຊອບແຜນງານ
ໂທ: 020 59689900
ເມວ: khanphoungeune.volaot@undp.org

ໂຄງການ ສສປວ: ທ່ານ ສົມສັກ ສຸວັນນະລາດ, ຜູ້ປະສານງານໂຄງການ
ໂທ: 020 22215252
ເມວ: somsacksounvannalath@gmail.com